ECCIL
EUROCHAM LAOS

European Chamber of Commerce
and Industry in Lao PDR

Vientiane Capital, 11th of May 2021
Ref No: 00000612

To: Permanent Secretary Office,
Ministry of Public Works and Transport
Vientiane, Lao PDR

**Subject: Request for clarification regarding the Prime Minister Order No.15/PMO dated on 21st of April 2021 and the Notice No. 0242/MPWT dated on 23rd of April 2021**

Dear Permanent Secretary,

The European Chamber of Commerce and Industry in Lao PDR (ECCIL EuroCham Laos) is an official business representative organisation of the European Business Community in Lao PDR, operating since 2011 under the umbrella of LNCCI. Our mission is to represent and advocate for the interests of our members. One of the Chamber's main activities is to collect update and inform our members on legal information and how to operate business in Lao PDR.

We are writing to you to seek clarifications on the movement of goods during the lockdown period, as provisioned in the Prime Minister Order No.15/PMO, dated on the 21st of April 2021, and the Notice No. 0242/MPWT dated on 23rd of April 2021.

It has been brought to our attention that business operators are facing difficulties to the latter when it comes to transport goods, at both provincial and district levels. Currently, business operators have shared issues related to:

- Non-uniformity in control and issuance of authorization letters across all levels (central, provincial, district and village levels): for instance, the delivery of goods to certain districts of Vientiane Capital requires an authorization letter from the Task Force Committee, while the Task Force Committee only issue them for transportation of goods out of the Capital, causing delays and additional expenses for business operators.
- Impossibility to pass some check points despite the presentation of the authorization letters; and additional requirements, such as COVID-19 tests or 14-days quarantine, requested by the authorities on the field, causing confusion for business operators.

Therefore, in order to provide our members with clear information, we would like to seek for clarification on the content of the attached documents and their implementation.

We would like to express our sincere thank you for your kind cooperation and we are looking forward to hearing from you.

Yours sincerely,

European Chamber of Commerce and Industry in Lao PDR, ECCIL

Ayaka VU
Executive Director

CC:

1. Ministry of Public Works and Transport 01 copy;
2. Ministry of Industry and Commerce 01 copy;
3. Lao National Chamber of Industry and Commerce 01 copy;
4. Vientiane Capital Task Force Committee 01 copy.

ECCIL, Villa Inpeng. No.74 Inpeng street, Watchan Village, Chanthabouly District, P.O. Box 11781, Vientiane, Lao PDR
Tel. +856-21-264330 Fax: +856-21-264331 E-mail: contact@eccil.org. Website: www.eccil.org

European Chamber of Commerce and Industry in Lao PDR

ເລກທີ..0..0..0..0..0..6..1..3

ນະຄອນຫຼວງວຽງຈັນ, ວັນທີ.11..MAY..2021.........

**ຮຽນ**: ທ່ານຫົວໜ້າຫ້ອງການ, ກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ເຄົາລົບນັບຖື.

**ເລື່ອງ**: ຂໍຄໍາຊີ້ແຈງກ່ຽວກັບເນື້ອໃນຂອງ ຄໍາສັ່ງນາຍົກລັດຖະມົນຕີ ເລກທີ 15/ນຍ ລົງວັນທີ 21 ເມສາ 2021 ແລະ ແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 242/ຍທຂ ລົງວັນທີ 23 ເມສາ 2021.

ຫ້ອງການສະພາການຄ້າ ແລະ ອຸດສາຫະກໍາເອີຣົບ ປະຈໍາ ສປປ ລາວ (ECCIL) ແມ່ນອົງການຈັດຕັ້ງທີ່ເປັນຕົວແທນໃຫ້ແກ່ນັກລົງທຶນເອີຣົບຢູ່ໃນ ສປປ ລາວ ນັບຕັ້ງແຕ່ປີ 2011 ເປັນຕົ້ນມາ ແລະ ດໍາເນີນການພາຍໃຕ້ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ. ໜຶ່ງໃນໜ້າທີ່ຫຼັກຂອງສະພາການຄ້າ ແລະ ອຸດສາຫະກໍາເອີຣົບ ປະຈໍາ ສປປ ລາວ ແມ່ນການສະໜອງ ແລະ ແຈ້ງຂໍ້ມູນທາງດ້ານກົດໝາຍໃຫ້ແກ່ສະມາຊິກພ້ອມທັງອໍານວຍຄວາມສະດວກໃຫ້ແກ່ສະມາຊິກລວມໄປເຖິງບັນດານັກລົງທຶນທີ່ສົນໃຈລົງທຶນຢູ່ໃນ ສປປ ລາວ.

ສະພາການຄ້າ ແລະ ອຸດສາຫະກໍາເອີຣົບ ປະຈໍາ ສປປ ລາວ ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ: ປັດຈຸບັນນີ້ສະມາຊິກຂອງສະພາການຄ້າເອີຣົບບາງສ່ວນໄດ້ປະສົບກັບຄວາມຫຍຸ້ງຍາກໃນການດໍາເນີນທຸລະກິດໂດຍສະເພາະແມ່ນຂະແໜງການຂົນສົ່ງສິນຄ້າທີ່ໄດ້ຮັບຜົນກະທົບໂດຍການດໍາເນີນທຸລະກິດແມ່ນໄດ້ດໍາເນີນການຈັດຕັ້ງປະຕິບັດໂດຍອີງໃສ່ເນື້ອໃນ ຄໍາສັ່ງນາຍົກລັດຖະມົນຕີ ເລກທີ 15/ນຍ ລົງວັນທີ 21 ເມສາ 2021 ແລະ ແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 242/ຍທຂ ລົງວັນທີ 23 ເມສາ 2021. ດັ່ງນັ້ນ, ຈຶ່ງຂໍຮຽນສະເໜີມາຍັງທ່ານໃນການໃຫ້ຄໍາຊີ້ແຈງຕໍ່ກັບການຕີຄວາມໝາຍເນື້ອໃນຂອງເອກະສານດັ່ງກ່າວທີ່ໃຊ້ເປັນບ່ອນອີງໃນການຈັດຕັ້ງປະຕິບັດເພື່ອຫຼີກລ່ຽງຜົນກະທົບໃນການປະຕິບັດຕົວຈິງເຊິ່ງມີເອກະສານຄັດຕິດມານໍາດັ່ງນີ້:

1. ຄໍາສັ່ງນາຍົກລັດຖະມົນຕີ ເລກທີ 15/ນຍ ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ-19 (COVID-19);
2. ແຈ້ງການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 242/ຍທຂ ລົງວັນທີ 23 ເມສາ 2021 ວ່າດ້ວຍ ການຂົນສົ່ງໂດຍສານ ແລະ ສິນຄ້າ ຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19.

ECCIL
EUROCHAM LAOS

European Chamber of Commerce
and Industry in Lao PDR

ລາຍລະອຽດຂອງຄວາມຫຍຸ້ງຍາກ ແລະ ບັນຫາກ່ຽວກັບການຈັດຕັ້ງປະຕິບັດທີ່ສະມາຊິກ ຂອງ ສະພາການຄ້າ ແລະ ອຸດສາຫະກຳເອີຣົບປະຈຳ ສປປ ລາວ ໄດ້ປະສົບມີດັ່ງນີ້:

1. ຄວາມບໍ່ເປັນເອກະພາບກັນໃນການກວດກາເອກະສານ ແລະ ອອກໃບຢັ້ງຢືນທີ່ກ່ຽວຂ້ອງທັງພາຍໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ທັງພາຍໃນນະຄອນຫຼວງວຽງຈັນ , ບັນດາແຂວງຕ່າງໆ, ຂັ້ນເມືອງ ແລະ ບ້ານ ເຊັ່ນ: ການຂົນສົ່ງພາຍໃນນະຄອນຫຼວງວຽງຈັນ ບາງຈຸດກວດກາຕ້ອງການໃບອະນຸຍາດຈາກຄະນະສະເພາະກິດນະຄອນຫຼວງວຽງຈັນແຕ່ບໍ່ສາມາດຂໍຈາກຄະນະສະເພາະກິດນະຄອນຫຼວງໄດ້ດ້ວຍເຫດຜົນທີ່ວ່າໃບອະນຸຍາດດັ່ງກ່າວຈະອອກໃຫ້ສະເພາະການຂົນສົ່ງສິນຄ້າອອກຈາກນະຄອນຫຼວງ. ບັນຫາດັ່ງກ່າວໄດ້ສ້າງຄວາມສັບສົນ ແລະ ຫຍຸ້ງຍາກໃຫ້ແກ່ບັນດາຫົວໜ່ວຍທຸລະກິດໃນການຂົນສົ່ງສິນຄ້າ ແລະ ສ້າງຄວາມລ່າຊ້າ ພ້ອມທັງເປັນການເພີ່ມທຶນໃນການດຳເນີນທຸລະກິດໃຫ້ສູງຂຶ້ນອີກດ້ວຍ.
2. ຈຸດກວດກາຫຼາຍຈຸດບໍ່ອະນຸຍາດໃຫ້ຜ່ານເຖິງວ່າຈະມີເອກະສານຄົບຖ້ວນແລ້ວກໍຕາມ, ແຕ່ລະຈຸດກວດກາມີຄວາມຕ້ອງການເອກະສານທີ່ບໍ່ເປັນເອກະພາບກັນເຊັ່ນບາງຈຸດກວດກາຕ້ອງໄດ້ໃຊ້ໃບກວດພະຍາດໂຄວິດ-19 ພ້ອມທັງໃຫ້ທຳການກັກໂຕກ່ອນເປັນເວລາ 14 ວັນ ຈຶ່ງຈະສາມາດຂົນສົ່ງສິນຄ້າໄດ້ເປັນຕົ້ນ. ບັນຫາດັ່ງກ່າວໄດ້ເຮັດໃຫ້ເກີດຄວາມສັບສົນໃຫ້ແກ່ຜູ້ຂົນສົ່ງສິນຄ້າ ແລະ ບໍລິສັດທີ່ດຳເນີນທຸລະກິດທີ່ກ່ຽວຂ້ອງ.

ດັ່ງນັ້ນ, ເພື່ອສ້າງຄວາມຊັດເຈນໃຫ້ແກ່ສະມາຊິກທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດຈຶ່ງຂໍຮຽນສະເໜີມາຍັງທ່ານໃນການໃຫ້ຄຳຊີ້ແຈງຕໍ່ກັບເນື້ອໃນຂອງບັນດາແຈ້ງການທີ່ໄດ້ຄັດຕິດມານຳນີ້ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາຕາມທາງຄວນດ້ວຍ.

ບ່ອນນຳສົ່ງ:

- ກະຊວງໂຍທາທິການ ແລະ ຂົນສົ່ງ 01 ສະບັບ
- ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 01 ສະບັບ
- ຄະນະສະເພາະກິດນະຄອນຫຼວງວຽງຈັນ 01 ສະບັບ

ໝາຍເຫດ: ໜັງສືສະບັບນີ້ແມ່ນໄດ້ແປມາຈາກສະບັບພາສາອັງກິດ, ຖ້າມີຄວາມຜິດພາດປະການໃດແມ່ນໃຫ້ອີງໃສ່ສະບັບພາສາອັງກິດເປັນຫຼັກ.

ECCIL, Villa Inpeng. No.74 Inpeng street, Watchan Village, Chanthabouly District, P.O. Box 11781, Vientiane, Lao PDR
Tel. +856-21-264330 Fax: +856-21-264331 E-mail: contact@eccil.org. Website: www.eccil.org